ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 096 /ທຄຕລ.2019
ນະຄອນຫຼວງວຽງຈັນ, ວັນທີ: 19 DEC 2019

ເຖິງ: ບັນດາບໍລິສັດຮັບເໝົາກໍ່ສ້າງ ແລະ ຕົບແຕ່ງ.

ເລື່ອງ: ແຈ້ງເຊີນບໍລິສັດເຂົ້າຮ່ວມຍື່ນປະມູນສະເໜີລາຄາວຽກງານຕົບແຕ່ງໜ່ວຍບໍລິການ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ ແລະ ຕົບແຕ່ງກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງສະເໜີລາຄາປະເມີນວຽກຕົບແຕ່ງໜ່ວຍບໍລິການ ທຄຕລ ຈຳນວນ 5 ໜ່ວຍຄື:

- ໜ່ວຍບໍລິການຫ້ວຍນ້ຳເຢັນຕັ້ງຢູ່ຕະຫຼາດໂຊກທະວີ ບ້ານຫ້ວຍນ້ຳເຢັນ, ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ
- ໜ່ວຍບໍລິການດອນໜູນໃນສູນການຄ້າເຟຣນຊິບ ບ້ານໄຊສະຫວ່າງ ເມືອງໄຊທານີ ນະຄອນຫຼວງວຽງຈັນ
- ໜ່ວຍບໍລິການບໍລິການຊະນະຄາມ ຕັ້ງຢູ່ບ້ານຊະນະຄາມ ເມືອງຊະນະຄາມ ແຂວງວຽງຈັນ
- ໜ່ວຍບໍລິການ ໂພນຕ້ອງສະຫວາດ ຕັ້ງຢູ່ບ້ານ ໂພນຕ້ອງສະຫວາດ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ
- ໜ່ວຍບໍລິການຕະຫຼາດກົກໂພ ຕັ້ງຢູ່ບ້ານວັດໄຕໃຫຍ່ທົ່ງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ

1. ບໍລິສັດ ສາມາດພົວພັນເອົາເອກະສານປະມູນ ເລີ່ມວັນທີ 23/12/2019, ເວລາ: 08:30 - 16:30 ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ທຄຕລ ສຳນັກງານໃຫຍ່ ແລະ ຕ້ອງຈ່າຍຄ່າທຳນຽມເອກະສານຈຳນວນເງິນ 250.000 ກີບ, ລາຍລະອຽດເອກະສານປະກອບມີດັ່ງນີ້:
   ກ. ແບບຟອມການຍື່ນຊອງປະມູນ.
   ຂ. ໃບປະເມີນລາຄາ 1 ຊຸດ.
   ຄ. ແບບຕົບແຕ່ງ 1 ຊຸດ.
2. ລາຄາທີ່ບໍລິສັດສະເໜີຕ້ອງເປັນລາຄາທີ່ບໍລິສັດຂອງທ່ານສາມາດທຳການຕົບແຕ່ງເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ກັບບໍລິສັດອື່ນ. ຖ້າຫາກວ່າ ບໍລິສັດມີຄວາມຈຳເປັນໃນການເຮັດສັນຍາຮັບເໝົາຊ່ວງຕໍ່ນັ້ນ ຈະຕ້ອງແຈ້ງໃຫ້ເຈົ້າຂອງໂຄງການ ແລະ ໄດ້ຮັບຄວາມເຫັນດີຈາກເຈົ້າຂອງໂຄງການເສຍກ່ອນ
3. ສາມາດສອບຖາມລາຍລະອຽດເພີ່ມເຕີມກ່ຽວກັບເຕັກນິກການຕົບແຕ່ງກ່ອນການຍື່ນຊອງໄດ້ຈາກວັນທີ 23/12/2019 - 16/01/2020, ໃນເວລາ 8:30 - 11:30 ໂມງ ແລະ 13:30 - 16:00 ໂມງ ທີ່ໝາຍເລກໂທລະສັບ 020 55522448, 020 77467722. ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນ ສິດໃນການຕອບຄຳຖາມໃດໆ ທັງໝົດ.
4. ການຍື່ນຊອງປະມູນຕ້ອງຍື່ນເປັນ 2 ຊອງ: 1.ຊອງປະມູນທາງດ້ານເຕັກນິກປະສົບການຜົນງານ, ຖານະການເງິນ ແລະ ບຸກຄະລາກອນ; 2. ຊອງປະມູນທາງດ້ານລາຄາ.
5. ຍື່ນເອກະສານສະເໜີລາຄາ ພ້ອມເອກະສານທາງດ້ານເຕັກນິກຂອງບໍລິສັດ ແລະ ຫຼັກຖານ ອື່ນໆ (ຕົ້ນສະບັບ) ມາຍັງ ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ກ່ອນວັນທີ 16/01/ 2020 ເວລາ 09:00 ໂມງ.
6. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈະທຳການປະເມີນຄັດເລືອກບໍລິສັດຮັບເໝົາຕົບແຕ່ງດ້ວຍວິທີຮູບແບບການປະມູນເປີດກ້ວາງ ພາຍຫຼັງສຳເລັດການຄັດເລືອກ ທຄຕລ ຈະແຈ້ງ ບໍລິສັດ ທີ່ສົ່ງຊອງເມີນຮັບຊາບ.

ເງື່ອນໄຂການປະກອບເອກະສານການປະມູນ ຕ້ອງປະກອບມີດັ່ງນີ້:

ຊອງທີ 1:

ກ. ໃບທະບຽນວິສາຫະກິດ ປະຈຳປີ 2019

ຂ. ໃບອະນຸຍາດດຳເນີນທຸລະກິດປີປະຈຸບັນ ( ປີ 2019 ໃບຢັ້ງຢືນສືບຕໍ່ເຄື່ອນໄຫວດຳເນີນທຸລະກິດ)

ຄ. ໃບທະບຽນອາກອນ 3 ປີຍ້ອນຫຼັງ (2017, 2018,2019)

ງ. ໃບຢັ້ງຢືນຖານະການເງິນປະຈຸບັນປີ 2019 (ອອກໃຫ້ໂດຍທະນາຄານ)

ຈ. ບັນຊີພາຫະນະຮັບໃຊ້ວຽກ ແລະ ອຸປະກອນຂອງບໍລິສັດ

ສ. ບັນຊີພະນັກງານຄຸ້ມຄອງ ແລະ ວິຊາການຂອງບໍລິສັດ

ຊ. ໃບຢັ້ງຢືນຜົນງານ ແລະ ປະສົບການ ການຕົບແຕ່ງສະເພາະທະນາຄານຢ່າງໜ້ອຍ 4 ໂຄງການ ລາຍລະອຽດຕາມແບບຟອມທີ່ຕິດຄັດດ້ານຫຼັງ.

ຊອງທີ 2:

ກ. ໃບປະເມີນລາຄາຕ້ອງເປັນສະກຸນເງິນກີບທີ່ປະກອບສຳເລັດແລ້ວ 1 ຊຸດ.

ດັ່ງນັ້ນ ຈຶ່ງແຈ້ງມາຍັງບັນດາ ບໍລິສັດ ເພື່ອຍື່ນຊອງສະເໜີລາຄາຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

ຜູ້ອຳນວຍການໃຫຍ່

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ຫລວງ

ສຸພັກ ຖິ່ນໄຊພອນ